ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ: 20 /ສພບ

ວັນທີ: 30/10/2020

ມະຕິ
ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນຄັ້ງທີ 4 ປະຈຳປີ 2020
ຄັ້ງວັນທີ 30/10/2020

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນຄັ້ງທີ 4 ປະຈຳປີ 2020 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 08:30 ໂມງ ວັນທີ 30/10/2020 ທີ່ແຂວງ ຫຼວງພະບາງ, ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍລະວົງ, ປະທານສະພາບໍລິຫານ ທຄຕລ, ມີ ສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

ກອງປະຊຸມ ໄດ້ປຶກສາຫາລືບັນຫາຕ່າງໆ ພ້ອມທັງໄດ້ມີມະຕິຕົກລົງດັ່ງນີ້:

1. ຮັບຮອງເອົານະໂຍບາຍຄວາມຕໍ່ເນື່ອງທາງການບໍລິຫານທຸລະກິດທຸລະກິດ ທຄຕລ;
2. ຮັບຮອງຮ່າງກົດລະບຽບວ່າດ້ວຍການເຂົ້າເປັນສະມາຊິກອົງການປະກັນສັງຄົມຂອງພະນັກງານ ທຄຕລ;
3. ຮັບຮອງການປັບປຸງກົດລະບຽບວ່າດ້ວຍລະບົບສະຫວັດດີການຂອງ ທຄຕລ;
4. ຮັບຮອງໂຄງປະກອບ ແລະ ມາດຕະຖານຄຸນວຸດທິຂອງສະພາບໍລິຫານ ທຄຕລ ຊຸດໃໝ່;
5. ຮັບຊາບການລາຍງານ ແລະ ຮັບຮອງວິທີການປະຕິບັດຕໍ່ລາຍການສິນເຊື່ອຈຳນວນໜຶ່ງ;
6. ຮັບຮອງການແຕ່ງຕັ້ງ ແລະ ການສັບຊ້ອນບຸກຄະລາກອນສຳຄັນຂອງ ທຄຕລ ຈຳນວນໜຶ່ງ.

ດັ່ງນັ້ນ, ຈຶ່ງໄດ້ອອກມະຕິສະບັບນີ້ໄວ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ປະທານສະພາບໍລິຫານ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ບຸນເຫຼືອ ສິນໄຊວໍລະວົງ